## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ເມສາ 2008 ( 04-20-2008 )

---

## <u>ສຳຣວດເບິ່ງຄວາມພຽນອົດທົນ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ປະຖົມມະການ 26:1-3,6,12-23)

**<u>ຄຳຖາມແຫ່ງຊີວິດ:</u>** ເຮັດແນວໃດຈຶ່ງເຮັດໃຫ້ຂ້າພະເຈົ້າອົດທົນໄດ້?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ຄົນຂອງພຣະເຈົ້າຕ້ອງອົດທົນດົນນານເມື່ອພົບກັບການຕໍ່ຕ້ານຂອງສັງຄົມ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍໃຫ້ທ່ານຄົ້ນຫາຫົນທາງໃໝ່ໃນຄວາມເຊື່ອຂອງທ່ານ ໂດຍ:

- ໃຫ້ປຽບທຽບກັບຄວາມອົດກັ້ນຂອງອີຊາກກັບຄວາມອົດທົນຂອງທ່ານ ເມື່ອພົບກັບບັນຫາ ແລະ
- ແກ້ບັນຫາດ້ວຍຄວາມອົດທົນທາງຄວາມເຊື່ອ ເຖິງແມ່ນວ່າຈະມີການຕໍ່ສູ້ອັນໜັກເກີດຂຶ້ນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຽັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ໃຫ້ນັກຮຽນແບ່ງປັນຄຳທີ່ມີຄວາມໝາຍດຽວກັນໃນພາສານຶ່ງຂອງຄຳວ່າ " ອົດທົນ " ໃຫ້ອ່ານຄຳຖາມແຫ່ງຊີວິດໃນບົດຮຽນມື້ນີ້: ເຮັດແນວໃດຈຶ່ງເຮັດໃຫ້ຂ້າພະເຈົ້າອົດທົນໄດ້?
- ໃຫ້ຜູ້ນຶ່ງອາສາສມັກຕອບດ້ວຍຄວາມຄິດ ຄວາມເຫັນເຣື່ອງ ເຮັດແນວໃດຈຶ່ງສາມາດເຮັດໃຫ້ຄົນອື່ນມີຄວາມອົດທົນໄດ້.
- ຄຳຖາມ: ເປັນສັງຄົມຈຶ່ງຫັນຫຼັງໃຫ້ກັບການເຊື່ອຟັງ ດ້ວຍວ່າມີບາງຄົນໄດ້ຊຸກເສື່ອງຄວາມເຊື່ອຂອງເຂົາໄວ້ເບື້ອງຫລັງ, ຫລືບໍ່ກໍປະຖິ້ມໄປ? ເປັນຫຍັງສັງຄົມຈຶ່ງບໍ່ໄດ້ສນັບສນູນຊຶ່ງກັນ ແລະກັນໃຫ້ມີຄວາມອົດກັ້ນ?

## 1. ການເຂົ້າໃຈແຜນການຂອງພຣະເຈົ້າ: (ປະຖົມມະການ 26:1-3,6)

- ຂໍໃຫ້ນັກຮຽນອາສາສມັກອ່ານ ປະຖົມມະການ 26:1-3,6
- ອ້າງເຖິງຂໍ້ມູນໃນບົດຮຽນອາທິດແລ້ວນີ້ຄື: **ແຜນການເດີນທາງຂອງອັບຣາມ** ຊຶ່ງບອກເຖິງເມືອງເກຣາ ຢູ່ທິດຕາເວັນອອກສຽງເໜືອຂອງບີເຊບາ, ປະມານເຄິ່ງທາງກ່ອນເຖິງຝັ່ງທະເລ.
- ພຣະເຈົ້າເປັນຜູ້ໃຫ້ຄວາມອຶດທົນແກ່ອີຊາກຢູ່ໃນແຄ້ວນການາອານ ໃນສະພາວະແຫ້ງແລ້ງຊຶ່ງເບິ່ງແລ້ວບໍ່ເຫັນມີວີ່ແວວ ແລະເກືອບຈະໝົດສະຕິໃນການເປັນມະນຸດ, ແຕ່ວ່າອີຊາກໄດ້ມີຄວາມເຂົ້າໃຈດີ ແລະໄດ້ໄວ້ວາງໃຈໃນພຣະເຈົ້າເປັນຢ່າງດີ. ໃຫ້ນັກຮຽນທວນຄິດເຖິງບົດຮຽນອາທິດແລ້ວນີ້ຈາກປະຖົມມະການ ບົດທີ 22 ທີ່ພຣະເຈົ້າໄດ້ຊົງຈັດຕຽມແກະໄວ້ແທນອີຊາກສຳລັບເຜົາຖວາຍເທິງກອງຟືນນັ້ນ.
- ສົນທະນາເຣື່ອງທີ່ວ່າ: ເປັນຫຍັງອີຊາກບໍ່ຕ້ອງການທີ່ຈະເຂົ້າໃຈລະອຽດໝົດທຸກຢ່າງໃນແຜນການຂອງພຣະເຈົ້າທີ່ສັ່ງໃຫ້ທຳຕາມ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 26:1-3,6)

1. ຊຶ່ງພຣະເຈົ້າໃຊ້ການອຶດຢາກເປີດເຜີຍແຜນການໃຫ້ອີຊາກ, ມີອັນໃດແດ່ທີ່ພຣະເຈົ້າຊົງໃຊ້ໂອກາດເປີດເຜີຍພຣະປະສົງຂອງພຣະອົງໃນຊີວິດຂອງທ່ານ?
2. ເຮັດແນວໃດທ່ານຈຶ່ງຈະກາຍມາເປັນຜູ້ທີ່ສົນໃຈເຣື່ອງຊົງພຣະຊົນຢູ່ຊອງພຣະເຈົ້າ?
3. ເປັນຫຽັງການທີ່ຮູ້ ແລະເຂົ້າໃຈວ່າຄຳສັນຍາຂອງພຣະເຈົ້າຍັງຄົງຢູ່ຈຶ່ງຖືວ່າເປັນຄວາມສຳຄັນ?
4. ໃນບົດຮຽນນີ້ເວົ້າເຖິງເຣື່ອງພລັງອຳນາດຂອງພຣະເຈົ້າທີ່ໄດ້ຊົງນຳພາ ແລະອວຍພອນແກ່ອີຊາກໃນຂໍ້ 1-3 ແລະຂໍ້ 6 ນັ້ນແມ່ນຫຍັງ?

## 2. ສັງຄົມບໍ່ຕ້ອງການ: (ປະຖົມມະການ 26:12-16)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ປະຖົມມະການ 26:12-16
- ນຳພານັກຮຽນໃຫ້ອອກຄວາມຄິດຄວາມເຫັນຫາເຫດຜົນວ່າ ເປັນຫຍັງພວກຟີລິສຕິນຈຶ່ງມີຄວາມອິດສາອີຊາກໂດຍເອົາຂີ້ດິນຖົມນ້ຳສ້າງຂອງລາວ.
- ພວກຟີລິສຕິນຫວັງທຳລາຍອີຊາກ. ໃຫ້ນັກຮຽນອາສາສມັກແບ່ງປັນທາງທີ່ຄົນຂອງພວກເຮົາໃນສມັຍນີ້ຊອກຫາຊ່ອງທາງລົບລ້າງ ຫລືທຳໃຫ້ຄຣິສຕຽນຈືດຈາງຫາຍໄປ. ຖາມວ່າ: ເປັນດ້ວຍເຫດໃດສັງຄົມວັທນະທັມຂອງພວກເຮົາຈຶ່ງເຂົ້າໄປມົ້ວສຸມຢູ່ກັບການຫາທາງທຳລາຍຢ່າງນີ້ງ່າຍດາຍແທ້? ທີ່ໂບດຂອງພວກເຮົາຄວນຈະມີທ່າທີແນວໃດຕໍ່ການຫວັງທຳລາຍແບບນີ້?
- ຜູ້ທີ່ເຊື່ອທັງຫລາຍຄວນໝັ້ນໃຈ ແລະຄັດຄ້ານຕໍ່ການຕໍ່ສູ້ຢ່າງນີ້ (ຢ່າທໍ້ຖອຍໃຈ) ອ່ານພຣະທັມ ໂຢຮັນ 15: 18-20. ຜູ້ທີ່ເຊື່ອທັງຫລາຍຈຶ່ງເປັນຄົນເຂັ້ມແຂງ ແລະຍືນໝັ້ນຢູ່ໃນຄວາມເຊື່ອໃນຖ້າມກາງສັງຄົມບ່ອນທີ່ເຂົາປະຕິເສດທ່ານ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ</u>: (ປະຖົມມະການ 26:12-16)

1. ແມ່ນຫຍັງເປັນຕົ້ນກຳເນີດໃຫ້ອີຊາກໄດ້ການເປັນຄົນຮັ່ງມີ? ທ່ານມີຄວາມຊື່ນຊົມຍິນດີກັບການອວຍພຣະພອນຂອງທ່ານບໍ່? ສິ່ງທີ່ທ່ານໄດ້ຮັບນັ້ນມາຈາກໃສ?
2. ທ່ານຈະຮູ້ໄດ້ຢ່າງໃດວ່າ ລາຍໄດ້ຂອງທ່ານບໍ່ແມ່ນມາຈາກການອວຍພຣະພອນຈາກພຣະເຈົ້າໝົດທຸກຢ່າງ?

ແມ່ນຫຍັງທີ່ເປັນການອວຍພຣະພອນທີ່ມາຈາກພຣະເຈົ້າ ທ່ານສາມາດບອກໄດ້ບໍ່?
3. ເປັນຫຍັງການອວຍພອນຂອງພຣະເຈົ້າຈຶ່ງມີຜົນໃຫ້ເກີດການອິດສາຈາກຝ່າຍກົງກັນຂ້າມ?
4. ຄົນກຸ່ມໃດໃນສັງຄົມຂອງພວກເຮົາທີ່ຄ້າຍຄືກັນກັບພວກຟີລິສຕິນໃນສມັຍຂອງອີຊາກ ທີ່ຢາກໃຫ້ຄຣິສຕຽນ ຫັນເຫໄປທາງອື່ນ? ພວກເຮົາຈະເຮັດແນວໃດເພື່ອຈະເປັນພຍານເຣື່ອງຄວາມເຊື່ອໃຫ້ກັບກຸ່ມອື່ນ ໆ ໄດ້?

**3. <u>ບໍ່ຍອມແພ້ຕໍ່ການຕໍ່ຕ້ານ:</u>** (ປະຖົມມະການ 26:17-22)

- ຂໍໃຫ້ນັກຮຽນອາສາສມັກອ່ານ ປະຖົມມະການ 26:17-22
- ສົນທະນາກັນວ່າ: ເປັນຫຍັງມະນຸດຈຶ່ງມັກມີການຕໍ່ຕ້ານກັນ ແລະຫລາຍເທື່ອກໍລົງໄມ້ລົງມືໃສ່ກັນ ໃນເຣື່ອງການອວຍພອນຂອງພຣະເຈົ້າ?
- ພ້າສົນໃຈວ່າ ເປັນຫຍັງບາງເທື່ອອີຊາກຈຶ່ງເລືອກເອົາການຍົກຍ້າຍໄປໂດຍບໍ່ໄດ້ຕໍ່ສູ້ແຕ່ຢ່າງໃດ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ປະຖົມມະການ 26:17-22
1. ໃນຂໍ້ທີ 19-21 ພວກຟີລິສຕິນໄດ້ເຮັດແນວໃດໃນການພົບນ້ຳສ້າງສອງແຫ່ງແຣກ?
2. ເປັນຫຍັງຈຶ່ງຈຳເປັນຕ້ອງຍ້າຍໜີອອກໃຫ້ສັດຕຣູທັ້ງ ໆ ທີ່ທ່ານບໍ່ໄດ້ເຮັດຜິດຫຍັງ?
3. ທ່ານຈະເຮັດແນວໃດໃຫ້ຄືອີຊາກ, ທີ່ຮັບໃຊ້ພຣະເຈົ້າຕາມເປົ້າໝາຍ ຫລືການຊົງນຳຂອງພຣະເຈົ້າທີ່ໃຫ້ຍ້າຍ ໄປບ່ອນໃໝ່, ສ້າງຕັ້ງຖິ່ນຖານໃໝ່?
4. ໃນທາງໃດທີ່ອີຊາກໄດ້ຕອບສນອງພຣະເຈົ້າດີທີ່ສຸດ ແລະໄດ້ຮັບການຊົງອວຍພຣະພອນຈາກພຣະເຈົ້າເປັນຢ່າງດີ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ການເຂົ້າໃຈແຜນການຂອງພຣະເຈົ້າເຮັດໃຫ້ພວກເຮົາສາມາດບາກບັ່ນຜ່ານຜ່າຄວາມຫຍຸ້ງຍາກໄດ້.
- ການທຳຕາມແຜນການຂອງພຣະເຈົ້າຈະນຳພາພວກເຮົາອົດທົນຈາກຝ່າຍກົງກັນຂ້າມໄດ້ຊຶ່ງບໍ່ແມ່ນເຮົາເອງ.
- ບາງເທື່ອພວກເຮົາກໍຕ້ອງຢືນໝັ້ນ ແລະເຂົ້າໃຈທີ່ວ່າຜູ້ຕໍ່ສູ້ນັ້ນບໍ່ແມ່ນແຜນການຂອງພຣະເຈົ້າ. ຈື່ໄວ້ວ່າ ພຣະເຈົ້າຈະອວຍພອນພວກເຮົາບໍ່ວ່າພວກເຮົາຈະເປັນແນວໃດ ແລະຢູ່ໃສ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH